# ເປັນຍາມກອງປະຊຸມໃຫຍ່ອີກແລ້ວ

ໂດຍ ປະທານ ທອມມັສ ແອັສ ມອນສັນ

ຕອນສ້າງຕຶກຫລັງນ ກໍຄິດວ່າຊິໃຫຍ່ພໍ, ແຕ່ກໍຍັງບໃຫຍ່ພໍເທື່ອ.

ອ້າຍເອອຍນ້ອງທີ່ຮັກແພງທັງຫລາຍ, ຈັງແມ່ນເປັນໂອກາດດີແທ້ໆທີ່ເຮົາໄດ້ມາເຕົ້າໂຮມກັນອີກ ໃນກອງປະຊຸມໃຫຍ່ປະຈຳເຄິ່ງປີຄັ້ງທີ181 ຂອງສາສນາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ.

ໃນລະຍະຫົກເດືອນຜ່ານມານ ເບິ່ງຄືວ່າມັນຜ່ານໄປຢ່າງວ່ອງໄວນໍ ແລະ ຂ້າພະເຈົ້າກໍຫຍຸ້ງຫລາຍກັບ ໜ້າທີ່ຮັບຜິດຊອບ. ພອນອັນຍິ່ງໃຫຍ່ຢ່າງໜຶ່ງລະຫວ່າງນນແມ່ນການອຸທິດພຣະວິຫານລາອີເອ ຣາວາຍ ທີ່ສວຍງາມຄືນໃໝ່, ຊຶ່ງໄດ້ຮັບການສ້ອມແປງຫລາຍສົມຄວນເກືອບເຖິງ 2 ປີ. ຂ້າພະເຈົ້າ ໄດ້ເດີນທາງໄປ ກັບປະທານ ແລະ ຊິດສະເຕີ ເຮັນລີ ບີ ໄອລິງ, ແອວເດີ ແລະ ຊິດສະເຕີ ຄະວິນຕັນ ແອວ ຄຸກ, ພ້ອມດ້ວຍ ແອວເດີ ແລະ ຊິດສະເຕີ ວິວລຽມ ອາ ວອກເກີ. ໃນຄ່ຳຄືນຕອນແລງກ່ອນການອຸທິດ, ຊຶ່ງຈັດຂນໃນເດືອນພະຈິກ, ພວກເຮົາໄດ້ເບິ່ງການສະແດງຂອງຊາວໜຸ່ມຈຳນວນ 2,000 ຄົນໃນສູນກາງສະໂມສອນແຄນນັນ ຂອງມະຫາວິທະຍາໄລບີວາຍຢູ ຣາວາຍ. ການສະແດງຂອງເຂົາເຈົ້າມີຊື່ວ່າ “ສະຖານທີ່ເຕົ້າໂຮມ” ທີ່ບອກເລົ່າເປັນຢ່າງດີເຖິງເຫດການທີ່ສຳຄັນໃນປະຫວັດສາດຂອງສາສນາຈັກ ແລະ ຂອງພຣະວິຫານຢູ່ໃນເຂດນນ. ມັນເປັນຄ່ຳຄືນທີ່ປະທັບໃຈແທ້ໆ!

ມຕມາ ເປັນມທີ່ຊື່ນຊົມທາງວິນຍານຂະນະທີ່ພຣະວິຫານ ຖືກອຸທິດໃນສາມພາກ. ພຣະວິນຍານຂອງພຣະຜູ້ເປັນເຈົ້າ ໄດ້ມາສະຖິດຢູ່ນຳພວກເຮົາຢ່າງຫລວງຫລາຍ.

ພວກເຮົາຈະດຳເນີນສ້າງພຣະວິຫານຕໍ່ໄປ. ຖືວ່າເປັນກຽດ ຢ່າງຍິ່ງທີ່ຂ້າພະເຈົ້າຈະປະກາດເຖິງ ພຣະວິຫານອີກສາມຫລັງ ຊຶ່ງຕອນນພວມຫາທີ່ດິນຢູ່ ຊຶ່ງຈະຖືກສ້າງຂນໃນເດືອນ ແລະ ປີທີ່ຈະມາເຖິງຢູ່ທີ່: ເມືອງຟອດ ໂຄລິນ, ລັດໂຄໂລຣາໂດ; ເມືອງເມຣິດຽນ, ລັດໄອດາໂຮ; ແລະ ເມືອງວິນນີເພກ, ແຂວງມານີໂທບາ, ປະເທດການາດາ. ພຣະວິຫານດັ່ງກ່າວຈະເປັນພອນຢ່າງຫລວງຫລາຍໃຫ້ແກ່ສະມາຊິກຜູ້ອາໄສ ຢູ່ໃນເຂດນນ.

ແຕ່ລະປີພິທີການເປັນລ້ານໆໄດ້ຖືກກະທຳຢູ່ໃນພຣະວິຫານ. ຂໍໃຫ້ເຮົາຈົ່ງສືບຕໍປະຕິບັດພິທີການເຫລົ່ານນ ດ້ວຍຄວາມຊື່ສັດ, ບໍ່ພຽງແຕ່ເຮັດເພື່ອຕົວເຮົາເອງເທົ່ານນ, ແຕ່ເພື່ອຜູ້ທີ່ລ່ວງລັບໄປແລ້ວ ຊຶ່ງບໍ່ສາມາດເຮັດ ເພື່ອຕົວເອງ.

ສາສນາຈັກກໍໄດ້ສືບຕໍ່ຊ່ອຍເຫລືອມະນຸດສະທຳໃນຍາມເກີດໄພ. ເມື່ອບໍ່ດົນມານ ຫົວໃຈ ແລະ ການຊ່ອຍເຫລືອຂອງພວກເຮົາໄດ້ ເອອມອອກໄປຫາປະເທດຍີ່ປຸ່ນ ຜູ້ຮັບເຄາະຈາກແຜ່ນດິນໄຫວ ແລະ ລົມພະຍຸສຸນາມິ ແລະ ບັນຫານິວຄະເລຍນຳອີກ. ພວກເຮົາໄດ້ສົ່ງສິ່ງຂອງຫລາຍກວ່າ 70 ໂຕນ ຊຶ່ງຮ່ວມດ້ວຍ ອາຫານ, ນ້ຳ, ຜ້າຫົ່ມ, ບ່ອນນອນ, ເຄື່ອງອະນາໄມ, ເສື້ອຜ້າ ແລະ ນ້ຳມັນໄປໃຫ້ເຂົາເຈົ້າ. ສະມາຊິກ

ຜູ້ໃຫຍ່ໂສດກໍໄດ້ສະລະເວລາຄົ້ນຫາສະມາຊິກຂອງສາສນາຈັກຜູ້ສູນຫາຍໄປໂດຍໃຊ້ອິນເຕີແນັດ, ອອກຂ່າວ, ແລະ ໃນທາງອື່ນໆອີກ. ສະມາຊິກຢູ່ທີ່ນັ້ນໄດ້ໃຊ້ລົດຈັກຂົນສິ່ງສິ່ງຂອງໄປໃຫ້ບ່ອນທີ່ລົດເຂົາໄປບໍ່ເຖິງ. ໂຄງການຮັບໃຊ້ໄດ້ຖືກຈັດຂຶ້ນ ເພື່ອຈັດເຄື່ອງອະນາໄມ ແລະ ເຄື່ອງທຳຄວາມສະອາດຢູ່ໃນສະເຕກ ແລະ ຫວອດແຫ່ງຕ່າງໆຢູ່ເມືອງໂຕກຽວ, ເມືອງນາໂກຢາ ແລະ ເມືອງໂອຊາກາ. ຕອນນເຂົາເຈົ້າໄດ້ຮັບໃຊ້ ຫລາຍກວ່າ 40,000 ຊົ່ວໂມງ ແລະ ມີຜູ້ອາສາສະໝັກຫລາຍກວ່າ 4,000 ຄົນ. ພວກເຮົາຈະສືບຕໍ່ ຊ່ອຍເຫລືອປະເທດຍີ່ປຸ່ນ ແລະ ໃນບ່ອນອື່ນໆນຳອີກທີ່ຕ້ອງການຄວາມຊ່ອຍເຫລືອ.

ອ້າຍເອື້ອຍນ້ອງທັງຫລາຍ, ຂ້າພະເຈົ້າຂໍຂອບໃຈສຳລັບສັດທາ ແລະ ການອຸທິດຕົນຂອງທ່ານຕໍ່ພຣະກິດຕິຄຸນ, ສຳລັບຄວາມຮັກ ແລະ ຄວາມເປັນຫ່ວງເປັນໄຍຂອງທ່ານຕໍ່ຄົນອື່ນ ແລະ ສຳລັບ ການຮັບໃຊ້ທີ່ທ່ານໄດ້ເຮັດຢູ່ ໃນຫວອດ ແລະ ສາຂາ ແລະ ສະເຕກ ແລະ ໃນທ້ອງຖິ່ນຂອງທ່ານ. ຂອບໃຈຫລາຍໆ ສຳລັບຄວາມ ຊື່ສັດຂອງທ່ານໃນການຈ່າຍເງິນສ່ວນສິບ ແລະ ເງິນບໍລິຈາກຢ່າງເພື່ອແຜ່ໃຫ້ແກ່ກອງທຶນອື່ນໆ ຂອງສາສນາຈັກ.

ໃນທ້າຍປີ 2010 ມີຜູ້ສອນສາສນາ 52,225 ຄົນທີ່ຮັບໃຊ້ຢູ່ໃນ ເຂດເຜີຍແຜ່ 340 ແຫ່ງ ຕະຫລອດທົ່ວໂລກ. ວຽກງານເຜີຍແຜ່ເປັນສິ່ງສຳຄັນຫລາຍຕໍ່ອານາຈັກ. ຂ້າພະເຈົ້າຂໍແນະນຳວ່າ ຖ້າທ່ານເຮັດໄດ້, ຂໍໃຫ້ທ່ານຈົ່ງບໍລິຈາກເງິນທຶນສຳລັບການເຜີຍແຜ່ຂອງສາສນາອີກນຳອີກ.

ບັດນີ້, ອ້າຍເອື້ອຍນ້ອງທັງຫລາຍ, ພວກເຮົາມີຄວາມຕື່ນເຕັ້ນ ທີ່ຈະໄດ້ຍິນຂ່າວສານໃນມື້ນີ້ ແລະ ໃນມື້ອື່ນ. ຜູ້ທີ່ຈະກ່າວກັບພວກເຮົາກໍໄດ້ທູນຂໍຄວາມຊ່ອຍເຫລືອ ແລະ ການນຳພາຈາກສະຫວັນໃນຂະນະທີ່ພວກເພິ່ນ ໄດ້ຕຽມຂ່າວສານ. ຂ້າພະເຈົ້າ ຫວັງວ່າເຮົາຈະເຕັມໄປດ້ວຍພຣະວິນຍານຂອງພຣະຜູ້ເປັນເຈົ້າ ແລະ ໄດ້ຮັບການຮຽນຮູ້ ແລະ ການດົນໃຈໃນຂະນະທີ່ເຮົາຮັບຊົມຮັບຟັງຂ່າວສານ. ໃນພຣະນາມຂອງພຣະເຢຊູຄຣິດ, ອາແມນ.